# ຄວາມສຳພັນກັບ ຜູ້ສ້າງຜູ້ແຕ່ງ ຂອງເຮົາ



2


“ເຈົ້າເຄີຍຮູ້ສຶກໂດດດ່ຽວບໍ?”
“ເຄີຍລະບໍ!”
“ເຈົ້າເຮັດແນວໃດ ເມື່ອເຈົ້າຮູ້ສຶກເຫງົາ?”
“ອື້ມ...! ຂ້ອຍຄິດກ່ຽວກັບ
ຄວາມໜ້າເວດທະນາຂອງຕົນເອງ”
“ຂ້ອຍຈະເລົ່າເລື່ອງ ກ່ຽວກັບຜູ້ຊາຍຄົນໜຶ່ງ
ທີ່ເຫງົາໃຫ້ເຈົ້າຟັງ”


ທອງດີ ອາໄສຢູ່ກັບ ພໍ່ເຖົ້າ ແລະ ແມ່ເຖົ້າຂອງລາວ ຕັ້ງແຕ່ລາວຍັງນ້ອຍໆ
ເພາະວ່າພໍ່ແມ່ຂອງລາວ ຕາຍປະລາວ. ລາວຮູ້ສຶກໂດດດ່ຽວຫຼາຍ.
“ເປັນຫຍັງຈຶ່ງບໍ່ມີໃຜສົນໃຈຂ້ອຍ?”
ທັນໃດນັ້ນ ວົງສອນ ໄດ້ຍ່າງເຂົ້າມາ
ແລະເຫັນ ທອງດີ ກຳລັງນັ່ງໂສກເສົ້າຢູ່ຄົນດຽວ.
“ເຮີ້ຍ! ເຈົ້າກຳລັງເຮັດຫຍັງຢູ່? ເບິ່ງຄືວ່າ ເຈົ້າໂສກເສົ້າແທ້?”
“ບໍ່ມີໃຜສົນໃຈຂ້ອຍເລີຍ!”
“ໂອ! ເຈົ້າຮູ້ບໍ? ມີຜູ້ໜຶ່ງ ກຳລັງສົນໃຈເຈົ້າຢູ່!”
“ແທ້ບໍ? ແມ່ນໃຜ?”
“ຜູ້ສ້າງຜູ້ແຕ່ງ ຂອງເຮົາ”


“ຜູ້ສ້າງຜູ້ແຕ່ງຫວາ? ຂ້ອຍຈະເວົ້າກັບຜູ້ສ້າງຜູ້ແຕ່ງ ໄດ້ແນວໃດ?”
“ພຣະເຈົ້າຜູ້ສ້າງຜູ້ແຕ່ງ ຈະເວົ້າກັບເຮົາໂດຍ ການອ່ານພຣະຄໍາພີ, ການອ້ອນວອນ ແລະການຊົມທໍາມະຊາດທີ່ ພຣະອົງ ຊົງສ້າງ.”
“ຂ້ອຍຈະອະທິບາຍ ໃຫ້ເຈົ້າຟັງ.”
“ເຮົາສາມາດຟັງພຣະເຈົ້າ ໂດຍການອ່ານພຣະຄໍາພີ ເພາະ ວ່າໃນພຣະຄໍາພີແມ່ນມີສິ່ງທັງຫຼາຍ ທີ່ ພຣະເຈົ້າ ເຕັມໃຈເວົ້າກັບເຮົາ”
“ການອະທິຖານເດ?”


“ການອະທິຖານ ກໍແມ່ນການເວົ້າກັບພຣະເຈົ້າ. ເຮົາສາມາດເວົ້າກັບພຣະເຈົ້າ ແລະແນ່ໃຈໄດ້ວ່າ ພຣະອົງຈະໄດ້ຍິນໄດ້ຟັງຄຳອະທິຖານຂອງເຮົາ ແລະຕອບສະໜອງທາງໃດທາງໜຶ່ງຕາມທີ່ພຣະອົງເຫັນດີເຫັນຊອບ.”
“ຢາກອະທິຖານ ນຳຂ້ອຍບໍ?”
“ເບິ່ງທຳມະຊາດສິ່ງທີ່ ພຣະເຈົ້າ ສ້າງຂຶ້ນແມ! ມັນງາມຫຼາຍ! ເບິ່ງແມ! ມັນເປັນສິ່ງທີ່ພິເສດທີ່ ພຣະເຈົ້າ ສ້າງສຳລັບເຮົາ.”
M. CH. SOKHA


“ຖ້າຢາກມີຄວາມສຳພັນທີ່ດີກັບໃຜຜູ້ໜຶ່ງ ເຮົາຕ້ອງໃຊ້ເວລາ ໃຫ້ຮູ້ຈັກກັນ
ສະໜິດສະໜົມກັນ. ຖ້າເວົ້າເຖິງຄວາມສຳພັນກັບ ພຣະເຈົ້າ ມັນຄືກັນບໍ?”


“ແມ່ນ! ພຣະເຈົ້າ ຊົງຮັກເຮົາ ແລະ ເປີດທາງໃຫ້ຄົນມີຄວາມສຳພັນກັບເພິ່ນໄດ້.
ພຣະເຈົ້າ ຢູ່ທຸກໆບ່ອນ ທັງໃນສະຫວັນ ແລະ ແຜ່ນດິນໂລກ.
ບໍ່ມີຜູ້ໃດລີ້ຈາກສາຍຕາຂອງ ພຣະເຈົ້າຜູ້ສ້າງຜູ້ແຕ່ງ ໄປໄດ້.”




ທອງດີ ເມືອເຮືອນຢ່າງມີ ກຳລັງໃຈ ແລະດີໃຈຫຼາຍ.



ກ່ອນເຂົ້ານອນ ລາວຈື່ສິ່ງທີ່ ວົງສອນ ອະທິບາຍກ່ຽວກັບ ການອະທິຖານ ແລ້ວລາວກໍໄດ້ອະທິຖານ.




ຄຳຖາມການສົນທະນາ
ເຈົ້າຄິດວ່າມີ ຜູ້ສ້າງຜູ້ແຕ່ງ ສ້າງເຮົາມາບໍ?
ແລະເພິ່ນສົນໃຈໃນຕົວເຮົາບໍ?
ເຈົ້າຄິດວ່າ ທຳມະຊາດທີ່ສວຍງາມນີ້
ແມ່ນໃຜເປັນຜູ້ສ້າງຂຶ້ນມາ?


ໃຊ້ເວລາອະທິຖານກັບ ພຣະເຈົ້າ
ເຈົ້າສາມາດເຮັດໄດ້ທຸກທີ່
ແລະ ທຸກເວລາ.
ເຈົ້າສາມາດເຮັດໄດ້ດ້ວຍຕົນເອງ
ຫຼື ເປັນຄູ່ກັບຄົນອື່ນກໍໄດ້.

ແຕ້ມຮູບສິ່ງທີ່ ພຣະເຈົ້າ ຊົງສ້າງທີ່ເປັນສິ່ງທີ່ເຈົ້າມັກຫຼາຍ
ເພື່ອເປັນການກ່າວຂອບໃຈຕໍ່ ພຣະເຈົ້າ.



ພຣະຜູ້ເປັນເຈົ້າ ອົງທີ່ໄດ້ສ້າງແຜ່ນດິນໂລກ
ແລະ ປະກອບໃຫ້ເປັນຮູບຮ່າງ ໄດ້ກ່າວແກ່ຂ້າພຣະເຈົ້າ.
ພຣະອົງ ຜູ້ມີນາມວ່າ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້:

"ຈົ່ງຮ້ອງຫາເຮົາ ແລະເຮົາຈະຕອບເຈົ້າ
ເຮົາຈະບອກໃຫ້ເຈົ້າຮູ້ເຖິງສິ່ງທີ່ໜັກໜ່ວງ
ແລະການອັດສະຈັນຕ່າງໆ ທີ່ເຈົ້າບໍ່ຮູ້."
ເຢເຣມີຢາ 33:2-3





© Alongsiders International
www.alongsiders.org
Email: info@alongsiders.org